ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມທະວິພາຄີ ປະຈຳປີ 2020 ລະຫວ່າງ ທຫລ ແລະ ທຫວ



ໃນຕອນເຊົ້າ, ວັນທີ 3 ທັນວາ 2020 ທີ່ຫ້ອງປະຊຸມຊັ້ນ 2 ກົມຮ່ວມມືສາກົນ, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ມີກອງປະຊຸມທະວິພາຄີ ປະຈຳປີ 2020 ຮູບແບບທາງໄກ ລະຫວ່າງ ທຫລ ແລະ ທະນາຄານແຫ່ງລັດ ຫວຽດນາມ (ທຫວ) ຊຶ່ງຝ່າຍ ທຫລ ຕາງໜ້າໂດຍ ທ່ານ ສອນໄຊ ສິດພະໄຊ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ຝ່າຍ ທຫວ ຕາງໜ້າໂດຍ ທ່ານ ນ. ຫງວຽນ ທິ ຮົ່ງ, ຜູ້ວ່າການ ທະນາຄານແຫ່ງລັດ ຫວຽດນາມ ພ້ອມດ້ວຍຄະນະກົມ ແລະ ຄະນະພະແນກຕາງໜ້າຈາກສອງທະນາຄານກາງໄດ້ໃຫ້ກຽດເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມດັ່ງກ່າວແມ່ນເພື່ອສະຫຼຸບໝາກຜົນການຮ່ວມມືໃນຂະແໜງການເງິນ-ເງິນຕາ ແລະ ແລກປ່ຽນບົດຮຽນທາງດ້ານວິຊາການຮ່ວມກັນໃນຫຼາຍບັນຫາສຳຄັນຕົ້ນຕໍຄື: ສະພາບເສດຖະກິດມະຫາພາກ, ແລກປ່ຽນກ່ຽວກັບມາດຕະການແກ້ໄຂທາງດ້ານການເງິນ-ເງິນຕາໃນໄລຍະການແຜ່ລະບາດຂອງພະຍາດ COVID-19, ຕີລາຄາຜົນການຮ່ວມມືສອງຝ່າຍໃນ 1 ປີ ຜ່ານມາ ແລະ ເປັນເອກະພາບຕໍ່ແຜນການຮ່ວມມືລະຫວ່າງ ສອງທະນາຄານກາງ ປະຈຳປີ 2021, ແລະ ບັນຫາອື່ນໆ ທີ່ທັງສອງຝ່າຍສົນໃຈຮ່ວມກັນ.




ກອງປະຊຸມໃນຄັ້ງນີ້ ໄດ້ດຳເນີນໄປເປັນເວລາເຄິ່ງວັນ ດ້ວຍບັນຍາກາດໄມຕີຈິດມິດຕະພາບ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງທະນາຄານກາງ ລາວ-ຫວຽດນາມ ແລະ ສາມາດບັນລຸຜົນສຳເລັດຕາມລະດັບຄາດໝາຍ. ຜົນສຳເລັດຂອງກອງປະຊຸມຄັ້ງນີ້ ຖືເປັນຂີດໝາຍອັນສຳຄັນໃນການເສີມຂະຫຍາຍສາຍພົວພັນຮ່ວມມືຂອງສອງປະເທດ ເວົ້າລວມ, ເວົ້າສະເພາະກໍ່ຄືສອງທະນາຄານກາງໃຫ້ນັບມື້ນັບເພີ່ມທະວີຄວາມສະໜິດແໜ້ນ, ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫ່ວາງສອງຊາດ ລາວ-ຫວຽດນາມ.

**#ຂ່າວໂດຍ: ກົມຮ່ວມມືສາກົນ, ທະນາຄານແຫ່ງ ສປປລາວ**

**#ພາບໂດຍ: ນ. ປາໄນພັນທະລາ**

**ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ**